ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: - 0155/26 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 19 ກຸມພາ 2026

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2026, ທີ່ຈັດຂຶ້ນໃນວັນທີ 19 ກຸມພາ 2026

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ 1/2026, ທີ່ຈັດຂຶ້ນໃນວັນທີ 19 ກຸມພາ 2026 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງບົດສະຫຼຸບລາຍງານການກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
2. ອະນຸມັດງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ແລະ ງົບກຳໄລຂາດທຶນສຳເລັດ) ປະຈຳປີ 2025 ທີ່ຜ່ານການກວດສອບຈາກຜູ້ກວດສອບບັນຊີພາຍນອກແລ້ວ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
3. ອະນຸມັດງົບຈ່າຍຄ່າຕອບແທນລາຍປີ 2025 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
4. ອະນຸມັດຈ່າຍໂບນັດ ສຳລັບພະນັກງານ ປະຈຳປີ 2025 ແລະ ອະນຸມັດງົບປະມານການປັບເງິນເດືອນ ປະຈຳປີ 2025-2026
5. ເຫັນດີຈັດສັນກຳໄລສຸດທິປະຈຳປີ 2025 ໃນອັດຕາ 10 ສ່ວນຮ້ອຍໄວ້ເປັນຄັງສຳຮອງຕາມລະບຽບການ ແລະ ອະນຸມັດໃຫ້ຈ່າຍເງິນປັນຜົນໃນອັດຕາ 16 ກີບຕໍ່ຮຸ້ນ ເຊິ່ງເທົ່າກັບ 6,400 ລ້ານກີບ ແລະ ກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອໃຫ້ມີສິດໄດ້ຮັບເງິນປັນຜົນໃນວັນທີ 30 ເມສາ 2026 ເວລາ 17.00 ໂມງ ເຊິ່ງມື້ຈ່າຍເງິນປັນຜົນຄືວັນທີ 15 ພຶດສະພາ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
6. ອະນຸມັດກູ້ຢືມເງິນຈາກທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໂດຍໃຊ້ Standby LC ຈາກທະນາຄານສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ ຈຳກັດ (EXIM) ຄ້ຳປະກັນ

7. ອະນຸມັດກູ້ຢືມເງິນຈາກ ທະນາຄານຮ່ວມພັດທະນາ (JDB)
8. ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງຈະໝົດວາລະ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
9. ອະນຸມັດແຜນບໍລິຫານຄວາມສ່ຽງ ປະຈຳປີ 2026
10. ອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ສຳຫຼັບປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
11. ອະນຸມັດແຕ່ງຕັ້ງ PricewaterhouseCooper (Lao) Sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2026 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ
12. ອະນຸມັດແຕ່ງຕັ້ງ August Audit and Consult Company Limited ເປັນຜູ້ກວດສອບລະບົບງານພາຍໃນ ສຳລັບປີ 2026 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ
13. ອະນຸມັດປ່ຽນແປງອຳນາດໃນການລົງນາມຂອງຜູ້ອຳນວຍການ ໃນນາມຂອງບໍລິສັດ
14. ອະນຸມັດຮຽກປະຊຸມຜູ້ຖືຮຸ້ນປະຈຳປີ 2025 , ວັນທີ 21 ເມສາ 2026 ເວລາ 09:30 ໂມງ, ທີ່ ໂຮງແຮມ ລາວ ພາຊ່າ, ຫ້ອງ May Hall ແລະ ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນແມ່ນກຳນົດມື້ ວັນທີ 06 ມີນາ 2026 ເວລາ 17:00 ໂມງ ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໂດຍມີວາລະປະຊຸມດັ່ງນີ້:
    1. ພິຈາລະນາຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024
    2. ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2025
    3. ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2025
    4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2025 ເປັນຄັ້ງສຳຮອງຕາມລະບຽບການ ແລະ ຈ່າຍເງິນປັນຜົນ
    5. ພິຈາລະນາອະນຸມັດງົບຈ່າຍຄ່າຕອບແທນລາຍປີ ສຳລັບປີ 2025 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ
    6. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງຈະໝົດວາລະ
    7. ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2026
    8. ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2026
    9. ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີ ປະຈຳປີ 2026

10. ພິຈາລະນາເລື່ອງອື່ນ (ຖ້າມີຜູ້ສະເໜີເພີ່ມເຕີ່ມ)

15. ເຫັນດີໃຫ້ແຕ່ງຕັ້ງ ທ່ານ ທິລະພົງ ຢອງປະໂຄນ ແລະ ທ່ານນາງ ມະລິ ໄຊຍະວົງ ໃຫ້ເປັນຜູ້ຕ່າງໜ້າຂອງບໍລິສັດ ຊຶ່ງເປັນຜູ້ທີ່ມີຄວາມຮູ້ດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າເປັນຄະນະກຳມະການກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້ ສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ປະທານການປະຊຸມ ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ທັ້ງນີ້ຖ້າຫາກມີຄວາມຈຳເປັນຕ້ອງປ່ຽນແປງຜູ້ຕາງໜ້າຂອງບໍລິສັດ ມອບສິດໃຫ້ຜູ້ອຳນວຍການເປັນຜູ້ເລືອກຜູ້ທີ່ມີຄຸນສົມບັດເໝາະສົມແທນໄດ້.

16. ຮັບຊາບຜົນການດຳເນີນການຂອງ ບໍລິສັດ ສິ້ນສຸດເດືອນ ມັງກອນ 2026

17. ຮັບຊາບສະຖານະການເງິນຂອງ ບໍລິສັດ ສິ້ນສຸດ 31 ມັງກອນ 2026 ແລະ ປະມານການ 3 ເດືອນຂ້າງໜ້າ;

18. ຮັບຊາບລາຍງານການກວດສອບລະບົບງານພາຍໃນ ຈາກບໍລິສັດ August Audit and Consult Company limited.

19. ຮັບຊາບເງື່ອນໄຂການກູ້ຍືມເງິນຈາກທະນາຄານ ພົງສະຫວັນ ຈຳກັດ

20. ຮັບຊາບການຕິດຕາມຄວາມສ່ຽງ ຕາມແຜນບໍລິຫານຄວາມສ່ຽງ ປະຈຳໄຕມາດ 4 ປີ 2025

21. ຮັບຊາບການປັບຜັງອົງກອນໃໝ່ຂອງບໍລິສັດ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ມານິບ ຕຣິລິດວິໄລ)